ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

8502

ນະຄອນຫຼວງວຽງຈັນ

ພະແນກ ໂຍທາທິການ ແລະ ຂົນສົ່ງ

ເລກທີ: /ຍທຂ.ນວ

ວັນທີ: 21 AUG 2024

ຂາເຂົ້າ ສຳນັກງານອົງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ: 3842
ວັນທີ: 22.8.24

## ໜັງສືລາຍງານ

**ຮຽນ: ທ່ານ ຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ ທີ່ນັບຖື.**

**ເລື່ອງ: ຊາວສວນຂໍນຳໃຊ້ ເຂດສະຫງວນແຄມທາງ ເລກ 10 ເພື່ອວາງຂາຍເບ້ຍໄມ້.**

- ອີງຕາມ ຂໍ້ຕົກລົງຂອງທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກ ໂຍທາທິການ ແລະ ຂົນສົ່ງ, ສະບັບເລກທີ 444/ຈນວ, ລົງວັນທີ 07 ເມສາ 2023.
- ອີງຕາມ ຄຳຮ້ອງສະເໜີ ຂອງຊາວສວນຜູ້ປະກອບການ ຢູ່ເຂດແຄມທາງເລກ10 ສະບັບລົງວັນທີ 18 ກໍລະກົດ 2024.
- ອີງຕາມ ແຈ້ງການ ຂອງຫົວໜ້າຫ້ອງວ່າການນະຄອນຫຼວງວຽງຈັນ ສະບັບເລກທີ 1313/ຫວນວ,ລົງວັນທີ 26 ກໍລະກົດ 2024.
- ອີງຕາມບົດບັນທຶກກອງປະຊຸມ ຄັ້ງວັນທີ 12 ສິງຫາ 2024.

ເພື່ອປະຕິບັດຕາມທິດຊີ້ນຳສະບັບເລກທີ 1313/ຫວນວ, ລົງວັນທີ 26 ກໍລະກົດ 2024 ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ຂໍຕາງໜ້າ ພະແນກ ທີ່ກ່ຽວຂ້ອງ ຂໍລາຍງານ ມາຍັງທ່ານເພື່ອຊາບ, ໃຫ້ທິດຊີ້ນຳ ແລະ ແຈ້ງຕອບຊາວສວນ (ຜູ້ປະກອບການ) ທີ່ຈະຂໍນຳໃຊ້ເຂດສະຫງວນທາງແຄມທາງເລກ 10 ເຊິ່ງມີລາຍລະອຽດດັ່ງນີ້:

ໃນຄັ້ງວັນທີ 12 ສິງຫາ 2024 ພະແນກ ໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ເຊີນ ພະແນກການ ທີ່ກ່ຽວຂ້ອງ ແລະ ກຸ່ມຊາວສວນເພື່ອມາປຶກສາຫາລື ແລະ ເຫັນດີເປັນເອກະພາບຮ່ວມກັນຄື:

1. ໃຫ້ຊາວສວນ (ຜູ້ປະກອບການຈຳນວນ) 15 ຫົວໜ່ວຍທຸລະກິດ ຕ້ອງໄດ້ຢຸດເຊົາການວາງຂາຍເບ້ຍໄມ້ຢູ່ແຄມທາງເຂດສະຫງວນ ທາງເລກ 10 ບ້ານ ດ່ານຊ້າງ ເມືອງໄຊທານີ ນະຄອນຫຼວງວຽງຈັນ ຕາມຄະນະກຳມະການ ອົງການປົກຄອງເມືອງ ໄດ້ລົງເຮັດບົດບັນທຶກໃຫ້ຍົກຍ້າຍອອກ ຄັ້ງວັນທີ 23 ກໍລະກົດ 2024.
2. ກອງປະຊຸມນຳສະເໜີ 2 ທາງເລືອກ ຂອງຊາວສວນປະກອບຄື:
   - ❖ ທາງເລືອກທີ1:
     - ເຫັນວ່າຂັດກັບກົດໝາຍທາງຫຼວງ(ສະບັບປັບປຸງ) ສະບັບເລກທີ 203/ປປທ, ລົງວັນທີ 05 ທັນວາ 2016 ວ່າດ້ວຍອົງປະກອບຂອງທາງຫຼວງ ແລະ ກົດໝາຍຜັງເມືອງ ວ່າດ້ວຍ ຮັກສາເຂດສະຫງວນທາງຫຼວງແຫ່ງຊາດ 50 ແມັດ (ເບື້ອງລະ 25 ແມັດ ນັບແຕ່ໃຈກາງທາງອອກ).
     - ບໍ່ສອດຄ່ອງກັບທະບຽນວິສາຫະກິດ ທີ່ໄດ້ອະນຸຍາດ (ທີ່ຕັ້ງ,ເຮືອນເລກທີ,ໃບຕາດິນເລກທີ).

- ຄະນະກຳມະການ ອົງການປົກຄອງເມືອງໄດ້ລົງເຮັດບົດບັນທຶກໃຫ້ຍົກຍ້າຍອອກ ຄັ້ງວັນທີ 23 ກໍລະກົດ 2024.

❖ ທາງເລືອກທີ2:

- ຈັດສັນຄືນໃໝ່ໃຫ້ຢູ່ຫ່າງໄກຊຸມຊົນ ແລະ ຫ່າງຈາກຂອບທາງ 2 ແມັດ.
- ເຮັດທົດລອງວາງຂາຍເບ້ຍໄມ້ ຊົ່ວຄາວ 1 ຫາ 3ປີ.
- ເສັ້ນທາງດັ່ງກ່າວຍັງບໍ່ທັນແອອັດ,ປະລິມານການສັນຈອນຍັງບໍ່ທັນໜາແໜ້ນ.
- ການຂາຍເບ້ຍໄມ້ແຕກຕ່າງຈາກການຂາຍຂອງກິນສຸກຫຼືອື່ນໆ(ໝາຍວ່າຄົນມາຊື້ບໍ່ເປັນປະຈຳ).
- ຮັກສາສະພາບແວດລ້ອມສະຖານທີ່ດັ່ງກ່າວ, ບໍ່ມີການຖິ້ມຂີ້ເຫຍື້ອຊະຊາຍ, ບໍ່ມີປ່າຫຍ້າຫົກເຮື້ອ. ເມືອງເຂົ້າຄຸ້ມຄອງແຕ່ງຕັ້ງຫົວໜ້າ ແລະ ຮອງພ້ອມດ້ວຍຄະນະ ເພື່ອຄຸ້ມຄອງສະດວກ,ຮູ້ແຫຼ່ງທີ່ມາຂອງຕົ້ນໄມ້ ແລະ ລຶກລ້ຽງການຂຸດຕົ້ນໄມ້ຊະຊາຍ.
- ຮ່າງໜັງສືສັນຍາເຊົ່າກັບຊັບສິນຊົ່ວຄາວໃນຊ່ວງທົດລອງ.
- ຜູ້ປະກອບການ ຈະສະໜອງເບ້ຍໄມ້ ຂະໜາດລວງສູງ 2,5 ແມັດ ເພື່ອປູກຕາມແຄມທາງ ພາຍໃນນະຄອນຫຼວງວຽງຈັນ. ໃນນີ້ ສຳລັບຮ້ານຂາຍເບ້ຍໄມ້ທົ່ວໄປ 14 ຮ້ານ ສະໜອງ ຈຳນວນ 500 ເບ້ຍຕໍ່ຮ້ານ ເທົ່າກັບ 7,000 ເບ້ຍ, ສຳລັບ ນາງ ພົດສະໄໝ ແກ້ວກຸນນະວົງ ຈະປະກອບ ສ່ວນ ຈຳນວນ 2,000 ເບ້ຍ ລວມເປັນຈຳນວນທັງໝົດ 9,000 ເບ້ຍຕໍ່ປີ ພ້ອມທັງບົວລະບັດຕົ້ນໄມ້.
- ສ່ວນການກຳນົດຈຸດທີ່ປູກ ແລະ ຊະນິດ ເບ້ຍໄມ້ມອບໃຫ້ເບື້ອງລັດເປັນຜູ້ກຳນົດ.
- ກໍລະນີໄດ້ຮັບການຈັດສັນແລ້ວ ຊາວສວນ (ຜູ້ປະກອບການ) ຫາກບໍ່ປະຕິບັດຕາມລະບຽບການຈະຖືກຍົກເລີກທັນທີ.

ດັ່ງນັ້ນ,ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ໃຫ້ທິດຊີ້ນຳຕາມທາງຄວນດ້ວຍ.

ຫົວໜ້າພະແນກ

ພະແນກ ໂຍທາທິການ ແລະ ຂົນສົ່ງ
ນະຄອນຫຼວງວຽງຈັນ

ພຸດທະເສນ ສິນທະວົງ